# ຄວາມທ້າທາຍດ້ານ ສິ່ງແວດລ້ອມໃນ ສປປ ລາວ



ຄວາມດຸ່ນດ່ຽງ ຂອງການພັດທະນາ ແລະ ຄວາມຍືນຍົງ

# ບັນຫາສິ່ງແວດລ້ອມກ່ຽວຂ້ອງກັບກິດຈະກຳຕ່າງໆຂອງ ມະນຸດທີ່ເຮັດໃຫ້ເກີດອັນຕະລາຍຕໍ່ລະບົບນິເວດ ທຳມະຊາດ ແລະ ສຸຂະພາບຂອງປວງຊົນ



- **ການຕັດໄມ້ທຳລາຍປ່າ -**
ການຕັດໄມ້ທຳລາຍປ່າເຮັດໃຫ້ເກີດການສູນເສຍທີ່ຢູ່ອາໄສ,
ການເຊາະເຈື່ອນຂອງດິນ ແລະ
ຄວາມຫຼາກຫຼາຍທາງຊີວະນານາພັນຫຼຸດໜ້ອຍລົງ.

- **ມົນລະພິດທາງອາກາດ** - ເກີດຈາກຍານພາຫະນະ,
ໂຮງງານອຸດສາຫະກຳ ແລະ ການຈູດເຊື້ອໄຟ (ຟອດຊິນ)
ທີ່ເປັນແຮ່ທາດເຊັ່ນຖ່ານຫີນ, ນ້ຳມັນ, ແກ໋ດສ
ເຮັດໃຫ້ເກີດພະຍາດກ່ຽວກັບທາງເດີນຫາຍໃຈ ແລະ ຝຸ່ນກິດ.

- **ມົນລະພິດທາງນ້ຳ** - ສານເຄມີຈາກ ປລາສຕິກ ແລະ
ສິ່ງເສດເຫຼືອທີ່ບໍ່ໄດ້ຮັບການບຳບັດ ປົນເປື້ອນ
ຈະໄຫຼລົງສູ່ແມ່ນ້ຳ, ທະເລສາບ ແລະ ມະຫາສະໝຸດ

# ບັນຫາສິ່ງແວດລ້ອມກ່ຽວຂ້ອງກັບກິດຈະກຳຕ່າງໆ ຂອງມະນຸດທີ່ເຮັດໃຫ້ເກີດອັນຕະລາຍຕໍ່ລະບົບ ນິເວດ ທຳມະຊາດ ແລະ ສຸຂະພາບຂອງປວງຊົນ

- **ການສູນເສຍຄວາມຫຼາກຫຼາຍທາງຊີວະພາບ** ການຂະຫຍາຍຕົວຂອງມະນຸດ, ມົນລະພິດ ແລະ ການລ່າສັດເຊິ່ງເປັນໄພຂົ່ມຂູ່ຕໍ່ພັນພືດ ແລະ ສັດ.

- **ການເຊື່ອມໂຊມຂອງດິນ** - ການປູກຝັງເກີນຂອບເຂດ, ການຕັດໄມ້ທຳລາຍປ່າ, ແລະ ການຂຸດຄົ້ນບໍ່ແຮ່ ເຮັດໃຫ້ຄວາມອຸດົມສົມບູນຂອງດິນຫຼຸດລົງ.

- **ບັນຫາການຈັດການຂີ້ເຫຍື້ອສິ່ງເສດເຫຼືອ** - ມົນລະພິດຈາກ ປລາສຕິກ, ຂີ້ເຫຍື້ອລົ້ນບ່ອນຖິ້ມ ແລະ ຂີ້ເຫຍື້ອເອເລັກໂຕຣນິກ ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ.



- ບັນຫາສິ່ງແວດລ້ອມສາມາດພົບເຫັນ ແລະ ຮູ້ສຶກໄດ້ໃນລະດັບທ້ອງຖິ່ນ
- ມັກຈະມີຜົນກະທົບທີ່ເຫັນໄດ້ທັນທີ
- ສາມາດໄດ້ຮັບການແກ້ໄຂໂດຍຜ່ານການຈັດຕັ້ງປະຕິບັດໃນທ້ອງຖິ່ນ

ຜົນກະທົບຂອງການປ່ຽນແປງ
ສະພາບດິນຟ້າອາກາດແມ່ນ
ແຕກຕ່າງກັນເລັກນ້ອຍ

ການປຽບທຽບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງສະພາບດິນຟ້າອາກາດ:

# ມີຄວາມແຕກຕ່າງ ກັນແນວໃດແດ່ ?

ສິ່ງແວດລ້ອມ



ສະພາບອາກາດ



| | ຂອບເຂດ | ຂອບເວລາ | ວິທີແກ້ໄຂ |
|---|---|---|---|
| **ສະພາບແວດລ້ອມ** | ທ້ອງຖິ່ນ ຫຼື ພາກພື້ນ | ມັກຈະມີຜົນກະທົບທັນທີທັນໃດ | ການຈັດຕັ້ງປະຕິບັດໃນທ້ອງຖິ່ນສາມາດຊ່ວຍໄດ້ |
| **ສະພາບອາກາດ** | ທົ່ວໂລກ | ພັດທະນາໃນຫຼາຍທົດສະວັດ ຫຼື ດົນກວ່ານັ້ນ | ຈຳເປັນຕ້ອງມີການຈັດຕັ້ງປະຕິບັດໃນທົ່ວໂລກ |

ການປຽບທຽບບັນຫາສິ່ງແວດລ້ອມ ແລະ ການປ່ຽນແປງສະພາບດິນຟ້າອາກາດ:

# ສິ່ງເຫຼົ່ານີ້ເຊື່ອມຈ ອດກັນແນວໃດ ?

ສິ່ງແວດລ້ອມ



ສະພາບອາກາດ



| | ການຕັດໄມ້ທຳລາຍປ່າ | ມົນລະພິດທາງອາກາດ | ການເຊາະເຈື່ອນຂອງດິນແລະມົນລະພິດ |
|---|---|---|---|
| **ສະພາບແວດລ້ອມ** | ທຳລາຍແຫຼ່ງທີ່ຢູ່ອາໄສຂອງສັດ | ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ | ເຮັດໃຫ້ການປູກພືດຍາກຂຶ້ນ |
| **ສະພາບອາກາດ** | ຕົ້ນໄມ້ ແລະ ພືດ ດູດຊຶມ $CO_2$ ໜ້ອຍລົງ | ມີສ່ວນເຮັດໃຫ້ເກີດປະກົດການເຮືອນແກ້ວ | ສະພາບອາກາດທີ່ຮຸນແຮງເຮັດໃຫ້ການເຊາະເຈື່ອນຮ້າຍແຮງຂຶ້ນ |

ການແກ້ໄຂບັນຫາໜຶ່ງ
ມັກຈະຊ່ວຍບັນຫາອື່ນໄດ້ນຳ

ທັງສອງຢ່າງຕ້ອງການຄວາມສົນໃຈ
ແລະ ການລົງມືຈັດຕັ້ງປະຕິບັດຂອງພວກເຮົາ